# ຖ້າ ການເປັນຜູ້ອຳນວຍຄວາມສະດວກໄດ້ດີ

# ປະຊາຊົນ ຈະມີຄວາມເຂັ້ມແຂງ

*ໂດຍ: ແສງເພັດ ວັນນະວົງ*



*ຜູ້ເຂົ້າຮ່ວມຊຸດຝຶກອົບຮົມວິທີເປັນອຳນວຍຄວາມສະດວກ ຢູ່ເມືອງເຊໂປນ ຝຶກຫັດຕົວຈິງຢູ່ ຂັ້ນບ້ານ*




*ຄູຝຶກ ແລະ ຜູ້ເຂົ້າຮ່ວມຊຸດຝຶກອົບຮົມວິທີເປັນອໍານວຍຄວາມສະດວກ ຢູ່ເມືອງວຽງທອງ, ແຂວງຫົວພັນ*

## ວຽກງານພັດທະນາຊົນນະບົດ **ບໍ່ມີຄວາມຍືນຍົງ**
## ຍ້ອນ **ຊຸມຊົນບໍ່ມີຄວາມເປັນເຈົ້າການ**
## ຊຸມຊົນບໍ່ມີຄວາມເປັນເຈົ້າການ
## ຂຶ້ນກັບ **ວິທີການສ້າງຄວາມເຂັ້ມແຂງ.**

ໃນລະຫວ່າງວັນທີ່ 7-9 ມັງກອນ 2014 ຜ່ານມານີ້ ພະແນກພັດທະນາຊຸມຊົນຈຶ່ງໄດ້ຈັດຊຸດຝຶກອົບຮົມ **ກ່ຽວກັບວິທີການເປັນຜູ້ອໍານວຍຄວາມສະດວກໃຫ້ແກ່ຊຸມຊົນ** ໃຫ້ແກ່ພະນັກງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນທາງດ້ານໂພຊະນາການ ຊຶ່ງເປັນໂຄງການທົດລອງຂອງ ທລຍ ໂດຍມີຜູ້ເຂົ້າຮ່ວມທັງໝົດ 26 ຄົນ, ເປັນຍິງ 11 ຄົນ. ສໍາລັບຊຸດຝຶກອົບຮົມຢູ່ເມືອງວຽງທອງ, ແຂວງຫົວພັນນັ້ນ ໂດຍການເປັນຄູຝຶກຂອງ ທ່ານ ຄໍາພັນ ພັນທະວົງ ຜູ້ຮັບຜິດຊອບວຽກງານພັດທະນາຊຸມຊົນ ປະຈໍາໂຄງການ ທລຍ ແຂວງຫລວງພະບາງ ແລະ ທ່ານ ນາງ ຕົງສອນ ທໍ່ ຜູ້ຮັບຜິດຊອບວຽກງານພັດທະນາຊຸມຊົນ ປະຈໍາໂຄງການ ທລຍ ແຂວງຫົວພັນ ແລະ ສໍາລັບຊຸດຝຶກອົບຮົມຢູ່ເມືອງເຊໂປນ, ແຂວງ

ສະຫວັນນະເຂດນັ້ນ ໂດຍການເປັນຄູຝຶກຂອງ ທ່ານ ສຸກສະໝອນ ແສງອາລຸນ ຜູ້ຮັບຜິດຊອບວຽກງານພັດທະນາຊຸມຊົນ ປະຈຳໂຄງການ ທລຍ ແຂວງສາລະວັນ ແລະ ທ່ານ ສິນນະຄອນ ອິນທິລາດ ຜູ້ຮັບຜິດຊອບວຽກງານພັດທະນາຊຸມຊົນ ປະຈຳໂຄງການ ທລຍ ແຂວງສະຫວັນນະເຂດ.

ການຝຶກອົບຮົມຊຸດນີ້ ເປັນການນຳເອົາປະສົບການ ແລະ ບົດຮຽນຕົວຈິງ ຈາກການພັດທະນາຊົນນະບົດ ຕາມຮູບແບບຂອງ ທລຍ ທີ່ເຄີຍຈັດຕັ້ງປະຕິບັດໃນໄລຍະຜ່ານມາ ຈົນມາຮອດປະຈຸບັນ ຊຶ່ງເປັນວິທີທີ່ເນັ້ນໃສ່ໃຫ້ພໍ່ແມ່ປະຊາຊົນຢູ່ຂັ້ນບ້ານ ມີສ່ວນຮ່ວມໃນການປຶກສາຫາ ແລະ ມອບສິດໃຫ້ເຂົາເຈົ້າເປັນຜູ້ຕັດສິນບັນຫາຕ່າງໆໃນການພັດທະນາຊຸມຊົນຂອງເຂົາເຈົ້າໂດຍເຂົາເຈົ້າເອງ ຊຶ່ງຕິດພັນກັບການຜັນຂະຫຍາຍທິດ 3 ສ້າງຂອງລັດຖະບານ ໂດຍສະເພາະແມ່ນການສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ.

---